# ບົດທີ 20

# ການສາລະພາບຜິດບາບ






**1** ໃນບົດທີ 3 ຂອງເຫຼັ້ມນີ້ ເຮົາໄດ້ສຶກສາເລື່ອງການປ່າວປະກາດຂອງໂຢຮັນບັບຕິສະໂຕ ເພິ່ນ ໄດ້ປະກາດວ່າ ລາ ຊະ ______________________________ ມາໃກ້ແລ້ວ. ເພື່ອຈະເຂົ້າອານາຈັກສະຫວັນໄດ້ ຈົ່ງຖິ້ມ ______________________________ . (ຈົ່ງຕື່ມຄວາມທີ່ຂາດ)

**2** ການຖິ້ມໃຈເກົ່າເອົາໃຈໃໝ່ ມີຄວາມໝາຍວ່າເຮົາຫັນຫຼັງໃຫ້ກັບຄວາມບາບ. ຖ້າຢ່າງນັ້ນເຮົາຈະປ່ຽນທ່າທີຕໍ່ຫຍັງ?______________________________

**3** ໃນ ມັດທາຍ 3:6 ຜູ້ທີ່ຕິດຕາມໂຢຮັນບັບຕິສະໂຕໄປ ເຮັດຢ່າງໃດກ່ອນຈະຮັບບັບຕິສະມາ?

______________________________

**4** ໃນບົດກ່ອນ ເຮົາໄດ້ຮຽນກ່ຽວກັບການທົດລອງຂອງພະເຢຊູ, ເຖິງແມ່ນວ່າພະເຢຊູຖືກທົດລອງກໍຕາມ ແຕ່ພະອົງບໍ່ໄດ້ ເຮັດບາບຈັກເທື່ອ ສ່ວນພວກເຮົາເຮັດບາບຢູ່ເລື້ອຍ. ໃຫ້ທ່ານອ່ານ I ໂຢຮັນ 1:8-10 ໃນພະຄຳພີຕອນນີ້ເພິ່ນ ຝາກໄປເຖິງຄຣິສຕຽນ. ພວກຄຣິສຕຽນມີຜູ້ເຮັດບາບບໍ່? ______________________________

**5** ຄຣິສຕຽນຕົກໃນບາບກໍມີແທ້ ດັ່ງນັ້ນຄັນເຮົາຈະອ້ອນວອນຕໍ່ພະເຈົ້າຢູ່ຜູ້ດຽວກໍດີ, ຢູ່ໃນປະຊຸມກໍດີ ເຮົາຄວນຈະນັດໂອ ກາດໄວ້ເພື່ອການຮັບ ______________________________ (ຕື່ມຄວາມທີ່ຂາດ)

**6** ແຕ່ບາງເທື່ອເຮົາບໍ່ຮູ້ວ່າ ສົມຄວນຈະສາລະພາບຜິດບາບຕໍ່ໃຜ ຄືຈະຮັບຕໍ່ຜູ້ນຳຄຣິສຕະຈັກບໍ່? ຈະຮັບຕໍ່ເພື່ອນບ້ານບໍ່? ຈະ ຮັບຕໍ່ໜ້າທີ່ປະຊຸມບໍ່? ຈະຮັບຕໍ່ພະເຈົ້າອົງດຽວບໍ່? (ບໍ່ຕ້ອງຕອບເທື່ອ) ໃຫ້ທ່ານອ່ານ ເພງສັນລະເສີນ 51:1-4 ຜູ້ຂຽນບັນທຶກໃນ ພສສ 51 ນັ້ນແມ່ນ ດາວິດ ຊຶ່ງເພິ່ນໄດ້ໄປຫຼິ້ນຊູ້ກັບເມຍເພື່ອນບ້ານແລະຂ້າຜົວເຂົາອີກດ້ວຍ. ຫຼັງ ຈາກຜູ້ທຳນວາຍຂອງພະເຈົ້າ ໄດ້ມາຊີ້ບອກຄວາມບາບນັ້ນ ດາວິດສາລະພາບຕໍ່ພະເຈົ້າ ໃນ ພສສ 51 ນັ້ນ.

ກ. ດາວິດ ອ້ອນວອນຕໍ່ໃຜ? (ຂໍ້ 1) ______________________________

ຂ. ດາວິດ ໄດ້ຮັບວ່າໄດ້ເຮັດຜິດຕໍ່ໃຜ? (ຂໍ້ 4) ______________________________

**ຕອບ:**

**1** *ອານາຈັກສະຫວັນ... ໃຈເກົ່າເອົາໃຈໃໝ່*

**2** *ຕໍ່ຄວາມຜິດບາບ*

**3** *ສາລະພາບຄວາມຜິດບາບຂອງຕົນ*

**4** *ມີ*

**5** *ສາລະພາບຜິດບາບ*

**6** *ກ. ພະເຈົາ ຂ. ພະເຈົາ*

**7** ບາບໃດໆ ກໍຕາມເປັນທີ່ຜິດຕໍ່ພະເຈົ້າ ເພາະເຫດນັ້ນເຮົາຄວນຈະຮັບສາລະພາບຕໍ່ພະເຈົ້າທຸກເທື່ອ. ແມ່ນຜູ້ໃດຈະຍົກ ຜິດບາບໄດ້? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ພະເຈົ້າ ຄ. ສັງຄົມທົ່ວໄປ

ຂ. ຄູບາ ງ. ປະທານບ້ານ (ຜູ້ປົກຄອງບ້ານ)

**8** ດາວິດຂຽນເລື່ອງການສາລະພາບບາບໃນ ເພງສັນລະເສີນ ບົດທີເທົ່າໃດ? ____________

**9** ພະເຈົ້າຍົກຜິດບາບຂອງເຮົາໄດ້ ເພາະພະເຢຊູຖືກໂທດແທນບາບເຮົາທີ່ໄມ້ກາງແຂນ. ຂໍ້ໃດແດ່ຕໍ່ໄປນີ້ອ້າງເຖິງການ ຍົກໂທດດ້ວຍຄວາມຕາຍຂອງພະອົງ? (ເລືອກໝາຍ √ ເອົາ)

_______ ມັດທາຍ 26:28

_______ ເອເຟໂຊ 1:7

_______ Iເປໂຕ 2:24

**10** ພະເຈົ້າບໍ່ປ່ຽນແປງ ພະອົງພ້ອມຈະຍົກໂທດຄວາມຜິດບາບຈາກຄົນທີ່ເຊື່ອແລະມາຫາພະອົງເຫມືອນຢ່າງ ສະໄຫມພະເຢຊູຢູ່ໃນໂລກ. ແຕ່ເພື່ອເຮົາຈະຮັບການຍົກໂທດຈາກພະອົງ ເຮົາຕ້ອງເຮັດຢ່າງໃດກ່ອນ? (ໃຫ້ເລືອກ)

ກ. ສາລະພາບບາບຕໍ່ໜ້າພະອົງ

ຂ. ລີ້ບາບໄວ້

ຄ. ແກ້ງເຮັດຄືບໍ່ມີບາບເລີຍເຮັດແບບກ້າຫານຫຍັບໄປຫາພະອົງ.

**11** ເຮົາຄວນຈະຮັບສາລະພາບຜິດບາບຂອງເຮົາເອງຕໍ່ໃຜ? ________________________

**12** ແມ່ນໃນ ເພງສັນລະເສີນບົດໃດ ທີ່ກະສັດດາວິດສາລະພາບບາບຫຼິ້ນຊູ້ແລະຂ້າຄົນຕໍ່ພະເຈົ້າ?

_____________________________________________________________________

_____________________________________________________________________

**13** ໃຫ້ອ່ານ I ໂຢຮັນ 1:9 ອີກ. ເພື່ອພະອົງຈະຍົກໂທດບາບຂອງພວກເຮົາ ແລະໂຜດຊໍາຮະລ້າງເຮົາຈາກການ ອະທໍາເຮົາຈະຕ້ອງຮັບຫຍັງກ່ອນ? ______________________________

ຕອບ:

**7** *ກ.ຖືກ*

**8** *ພສສ 51*

**9** *ຖືກທັງສາມ*

**10** *ກ.ຖືກ*

**11** *ພະເຈາ*

**12** *ພສສ 51*

**13** *ສາລະພາບບາບ*

**14** ແມ່ນແທ້ ທີ່ພະເຈົ້າໄດ້ລົງຄຳສັນຍາອັນມີຄຸນຄ່າຕໍ່ຄົນໃດທີ່ຈະສາລະພາບບາບຕໍ່ພະອົງ. ຄວາມສັນຍານັ້ນຢູ່ໃນບົດໃດ ຂໍ້ໃດ? ____________________________________

*ໃຫ້ທ່ານຈົ່ງທ່ອງຂຶ້ນໃຈໃນ I ໂຢຮັນ 1:9*

**15** ເຮົາຕ້ອງສາລະພາບຜິດບາບຂອງເຮົາຕໍ່ພະເຈົ້າ ເພາະບາບທຸກປະການເປັນທີ່ຜິດຕໍ່ພະເຈົ້າ ແລະມີແຕ່ພະເຈົ້າທີ່ຍົກ ໂທດບາບໄດ້. ແຕ່ເຖິງຢ່າງໃດກໍດີ ມີບາບບາງຢ່າງທີ່ຜິດຕໍ່ທັງພະເຈົ້າ ແລະທັງຜິດຕໍ່ມະນຸດດ້ວຍ. ຖ້າເຮົາເວົ້າຄວາມ ຕົວະຕໍ່ຫມູ່ເພື່ອນເຮົາຕ້ອງສາລະພາບໄປທາງ ໃດແດ່? (ໃຫ້ຫມາຍ ເອົາຂໍ້ທີ່ເຫັນວ່າຖືກ)

_______ ຕໍ່ພະເຈົ້າຢ່າງດຽວ ພະເຈົ້າ

_______ ຕໍ່ເພື່ອນຢ່າງດຽວ

_______ ບໍ່ຮັບຕໍ່ໃຜເລີຍ

_______ ຮັບຕໍ່ທັງພະເຈົ້າ ແລະຕໍ່ຫມູ່ເພື່ອນ




**16** ໃຫ້ອ່ານ ມັດທາຍ 5:23-24 ໃນ 2 ຂໍ້ນັ້ນ ພະເຢຊູບອກວ່າ ເຮົາຄວນຈະຄືນດີກັບອ້າຍນ້ອງ ຕອນເວລາໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ກ່ອນຈະມາຫາພະເຈົ້າ

ຂ. ຫຼັງຈາກຂາບໄຫວ້ພະເຈົ້າ

ຄ. ໃນອະນາຄົດພຸ້ນ

**17** ຫມາຍຄວາມວ່າ ຄັນບາບເຮົານັ້ນມີສ່ວນກ່ຽວຂ້ອງກັບຄົນອື່ນເຮົາຕ້ອງສາລະພາບຕໍ່ທັງ ______________________ ແລະ ______________________

**18** ກ. ເຮົາສົມຄວນທີ່ຈະສາລະພາບບາບທຸກປະການຕໍ່ ______________ (ຕື່ມຄວາມທີ່ຂາດ)

ຂ. ບາບໃດທີ່ກ່ຽວຂ້ອງກັບຜູ້ອື່ນ ເຮົາສົມຄວນຈະສາລະພາບຕໍ່ ______________

**19** ເຮົາຕ້ອງສາລະພາບບາບທຸກປະການຕໍ່ໃຜ? ______________________

ຕອບ:

**14** *I ໂຢຮັນ 1:9*

**15** *ຮັບຕໍ່ທັງພະເຈາ ແລະຕໍ່ຫມູ່ເພື່ອນ*

**16** *ກ.ຖືກ*

**17** *ພະເຈາ ແລະ ຄົນຜູ້ນັ້ນດ້ວຍ*

**18** *ກ. ພະເຈາ ຂ. ຜູ້ນັ້ນດ້ວຍ*

**19** *ພະເຈາ*

**20** ແຕ່ຍັງມີອີກຢ່າງໜຶ່ງດ້ວຍ ຄືນເຮົາຖິ້ມໃຈເກົ່າເອົາໃຈໃໝ່ແທ້ ບໍ່ແມ່ນພຽງແຕ່ເຮົາຈະສາລະພາບຕໍ່ຜູ້ກ່ຽວ ແຕ່ເຮົາ ຕ້ອງເອົາສິ່ງທີ່ເສຍຄືນໃຫ້ເຂົາອີກດ້ວຍ. ຍົກຕົວຢ່າງຖ້າເຮົາໄດ້ລັກສິ່ງໃດຈາກເພື່ອນບ້ານ ເຮົາຈະເອົາຄືນໃຫ້ສິ່ງທີ່ ເສຍໄປ. ໃຫ້ອ່ານຂໍ້ພະຄໍາພີຕໍ່ໄປນີ້ແລ້ວໝາຍເອົາຂໍ້ໃດ ທີ່ວ່າດ້ວຍການເອົາຄືນໃຫ້? (ເລືອກເອົາຂໍ້ທີ່ຖືກ)

ກ. ເອເຊກຽນ 33:15-16 ຄ. ປະຖົມມະການ 4:8-9

ຂ. ລູກາ 19:8-9 ງ. ຊາມູເອນທີນຶ່ງ 12:3

**21** ການສາລະພາບບາບ ກໍຄືຜົນແຫ່ງການຖິ້ມໃຈເກົ່າເອົາໃຈໃໝ່ ແຕ່ຍັງມີຜົນປະການທີສອງອີກ. ຖ້າເຮົາເຄີຍເຮັດໃຫ້ ຄົນອື່ນບໍ່ພໍໃຈປະການໃດ ເຮົາຕ້ອງເອົາສິ່ງທີ່ເສຍນັ້ນ _________________ ໃຫ້. (ຈົ່ງຕື່ມຄວາມທີ່ຂາດ)

ແປວ່າ ເຮົາຕ້ອງກໍ່ສ້າງຄວາມສໍາພັນລະຫວ່າງເຮົາກັບຜູ້ທີ່ເສຍໃຈເພາະຄວາມບາບຂອງເຮົາ.

**22** ໃຫ້ອ່ານ ລູກາ 19:8-9 ອີກ. ແມ່ນຜູ້ໃດເຫັນພ້ອມກັບການຊົດໃຊ້ຂອງຊັກຂາຍ? ________

**23**




ຮູບໃດທີ່ອ້າງເຖິງ... _______ ບາບ

_______ ການສາລະພາບ

_______ ການເອົາຄືນໃຫ້

**24** ການເອົາຄືນໃຫ້ຄືຫຍັງ? ______________________________________________

______________________________________________________________

ຕອບ:

***20*** *ກ. ຂ. ງ. ຖືກ*

***21*** *ຄືນ*

***22*** *ພະເຍຊູ*

***23*** *ກ. ບາບ ຂ. ການສາລະພາບ ຄ. ກາເອົາຄືນໃຫ້*

***24*** *ການກໍ່ສ້າງຄວາມສໍາພັນກັບຄົນທີ່ເຮົາ ເຮັດຜິດດ້ວຍເອົາຂອງຄືນໃຫ້.*
*(ຫຼືຄໍາຄ້າຍຄືກັນກໍໄດ້)*

**25** ໃຫ້ທ່ານໝາຍ √ ໃສ່ປະໂຫຍກທີ່ສະແດງການເອົາຄືນໃຫ້

ກ. _______ ທ່ານຂໍຢືມປຶ້ມອ່ານຈາກຫ້ອງສະໝຸດ ກາຍເວລາແລ້ວທ່ານສົ່ງຄືນແລະໃຊ້ຄ່າປັບໄໝດ້ວຍ.

ຂ. _______ ຊື້ຜ້າແພຈາກເພື່ອນ.

ຄ. _______ ພໍ່ເຖົ້າໃຫ້ຢືມເງິນມາວ່າ 6 ເດືອນຈະສົ່ງ ແຕ່ກາຍເວລາແລ້ວທ່ານຈຶ່ງສົ່ງໃຫ້.

ງ. _______ ເອົາຂອງຂວັນໃຫ້ແມ່ເຖົ້າ.

ຈ. _______ ທ່ານລັກຂອງຈາກພໍ່ຄ້າມາ 3 ປີກ່ອນ ທ່ານເລີຍເອົາຄືນໃຫ້.

ສ. _______ ທ່ານເວົ້າຂວັນເລື່ອງໝູ່ຕໍ່ໄປຈຶ່ງໄດ້ຂໍອະໄພຈາກເຂົາແລະຈາກຜູ້ຟັງດ້ວຍ.

ຊ. _______ ທ່ານຢືມກີຕ້າຈາກເພື່ອນຫຼາຍເດືອນ ແລ້ວສົ່ງຄືນໃຫ້ແຕ່ບໍ່ກາຍກຳນົດ.

**26** ໃຫ້ທ່ານກັບໄປໜ້າປົກບົດນີ້ ເບິ່ງຮູບກາຕູນຂ້າງລຸ່ມ ຄົນທີ່ເອົາເຄື່ອງມືໄປໂດຍບໍ່ໄດ້ຮັບອະນຸຍາດ ແລ້ວເຮັດໃຫ້ມັນ ເສຍຄວນຈະເຮັດຢ່າງໃດ? ____________________________

*ໃຫ້ເຮົາຢຸດພັກຈັກບຶດກ່ອນ! ມີຄົນໃດທີ່ທ່ານສົມຄວນຈະເອົາຄືນໃຫ້ບໍ່? ອາດຈະເປັນຍາດພີ່ນ້ອງ ອາດຈະເປັນເພື່ອນ ບ້ານ ອາດຈະເປັນພໍ່ຄ້າ. ໃຫ້ທ່ານຮັບພິຈາລະນາດີໆ ວ່າຈະເອົາຄືນໃຫ້ຢ່າງໃດ ແລະໃນເວລາໃດ. ຈົ່ງຂໍໃຫ້ພະວິນ ຍານບໍລິສຸດສະແດງໃຫ້ທ່ານສຳນຶກຜູ້ອື່ນໆ ທີ່ທ່ານເຄີຍຜິດມາ ແລ້ວໃຫ້ທ່ານວາງແຜນໄວ້ຂຽນໃສ່ເຈັ້ຍເລື່ອງບັນຫາເຫຼົ່າ ນັ້ນ, ຖ້າວ່າສຳເລັດແລ້ວໃຫ້ທ່ານເອົາເຈັ້ຍນັ້ນຈີກຖິ້ມ.*

| ຝຶກ: ໃຫ້ທ່ານເອົາສໍສີຂຽວຂີດກ້ອງ ສຸພາສິດ 28:13 |
|---|

**27** ໃນຂໍ້ພະຄຳພີທີ່ທ່ານຫາກໍ່ຂີດກ້ອງນັ້ນ

ກ. ແມ່ນຜູ້ໃດທີ່ຈະບໍ່ຈະເລີນ? ________________________________________

ຂ. ພະເຈົ້າຈະສຳແດງພະກະລຸນາຕໍ່ໃຜ? __________________________________

| ບາດນີ້ໃຫ້ເຮົາຝຶກການຮຽນໂດຍວິທີສັງເກດ. ໃຫ້ອ່ານ ພສສ 32:3-5<br>ແລ້ວໃຫ້ພະຄຳພີເປີດຢູ່. ດາວິດເປັນຜູ້ຂຽນໃນບົດນີ້. |
|---|

**28** ກ. ຜູ້ທີ່ບໍ່ຍອມຮັບສາລະພາບຢູ່ໃນສະຖານທີ່ອັນຕະລາຍ. ແມ່ນໃນຂໍ້ໃດ ທີ່ດາວິດອ່ອນແຮງລົງ? ______________________________________________________

ຂ. ແມ່ນຂໍ້ໃດທີ່ບອກວ່າ ດາວິດສາລະພາບບາບແລ້ວ ພະເຈົ້າອະໄພໃຫ້? ___________

ຕອບ:

**25** *ກ. ຄ. ຈ. ແລະ ສ.ຖືກ*

**26** *ເຂົາຄວນຈະຫາເຄື່ອງມືມາແທນ (ໃຫ້ໝູ່ປຶກສາໃນປະຊຸມ)*

**27** *ກ. ຜູ້ທີ່ພະຍາຍາມປິດບັງບາບໄວ້ ຂ. ຜູ້ຮັບສາລະພາບແລະປ່ຽນໃຈ*

**28** *ກ. ຂໍ້ 4 ຂ. ຂໍ້ 5*

**29** ດາວິດຮັບທຸກແລະອ່ອນກຳລັງໃນເວລາໃດ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ເມື່ອປິດບັງບາບໄວ້ ຄ. ຕະຫຼອດເວລາ

ຂ. ເມື່ອສາລະພາບບາບຕໍ່ພະເຈົ້າ ງ. ບໍ່ເປັນດັ່ງນັ້ນຈັກເທື່ອ

**30** ເມື່ອເວລາໃດ ທີ່ດາວິດປິດບັງບາບໄວ້ໂດຍບໍ່ສາລະພາບຕໍ່ພະເຈົ້າ ເພິ່ນຮູ້ສຶກຮັບທຸກອ່ອນກຳລັງແລະຖອຍລົງອີກ ແຕ່ ຫຼັງຈາກເພິ່ນໄດ້ຮັບ ________________________________ ຕໍ່ໜ້າພະເຈົ້າ ພະອົງຊົງ __________________________________ ໃຫ້.

**31** ຄົນໃດທີ່ໄດ້ຮັບສະລະພາບຜິດຕໍ່ພະເຈົ້າ ຄົນນັ້ນແຂງແຮງຂຶ້ນໃນຈິດວິນຍານແລະຮ່າງກາຍດ້ວຍ. ໃນ ພສສ 32:1-4 ມີຂໍ້ໃດ ທີ່ເວົ້າເຖິງຄວາມສຸກຂອງຄົນທີ່ສາລະພາບແລະ ພະເຈົ້າຍົກໂທດໃຫ້? ________________________________________________________

**32** ຮູບໃດ ຕໍ່ໄປນີ້ ສະແດງເຖິງຄົນທີ່ຮັບສາລະພາບບາບ? ________________________
ຮູບໃດ ຄົນທີ່ບໍ່ໄດ້ສາລະພາບ? __________________________________________



ກ



ຂ

**33** ເຮົາໄດ້ຮຽນມາເລື່ອງ ເພງສັນລະເສີນ ຂອງກະສັດດາວິດ 2 ບົດທີ່ເພິ່ນສາລະພາບຜິດບາບ. ຄືແມ່ນສອງບົດໃດ? ________________________________________________

ຕອບ:

**29** *ກ. ຖືກ*

**30** *ສາລະພາບ...ອະໄພ (ຫຼືຍົກໂທດໃຫ້)*

**31** *ຂໍ້ 1-2*

**32** *ຮູບ ຂ. ຄົນຮັບສາລະພາບແລ້ວ ຮູບ ກ. ບໍ່ໄດ້ຮັບສາລະພາບ*

**33** *ຂໍ້ 32 ແລະ 51*

**34** ມີພະຍາດບາງຢ່າງທີ່ມີມາເພາະຈິດໃຈສຳນຶກຜິດ ບາງຄົນຫ່ວງກັບບາບຈົນກວ່ານອນບໍ່ຫຼັບ. ເຊັ່ນດຽວກັນກັບດາວິດ ພະຍາດທີ່ມາທາງຈິດໃຈທີ່ສຳນຶກຜິດນັ້ນ ອາດສາມາດຮັກສາໃຫ້ຫາຍດີໄດ້, ຖ້າຄວາມຜິດຫາຍໄປ ຄວາມສຳນຶກຜິດ ຫາຍດີໄດ້ໂດຍທາງດຽວຄື ການຮັບ ______________________________ ບາບ. (ຕື່ມຄວາມທີ່ຂາດ)

**35** ບາບທີ່ອາດຈະເຮັດໃຫ້ເຮົາມີພະຍາດໃນຮ່າງກາຍມີຄື: ໃຈຂົມຂື່ນ ໃຈໂມໂຫ ໃຈຄຽດຮ້າຍ ການອິດສາ ໆ ລ ໆ ຖ້າເຮົາຈະແກ້ບັນຫາທີ່ມາທາງບາບເຫຼົ່ານັ້ນ ເຮົາຈິ່ງຮັບຫຍັງ? ______

**36** ຕອນໃດທີ່ເຮົາສຳນຶກຜິດບາບ ເຮົາຄວນຈະອ້ອນວອນຮັບສາລະພາບບາບນັ້ນທັນທີ. ໃນເມື່ອເຮົາຈະຊື້ຂອງຕ້ອງເຮັດ ຢ່າງໃດດີກວ່າ? (ໃຫ້ເລືອກ)

ກ. ຈ່າຍເງິນໃຫ້ທັນທີ

ຂ. ໃຫ້ພໍ່ຄ້າຮວມໜີ້ໄວ້ທ້າຍເດືອນມາຈິ່ງຈາຍ.

**37** ຄົນເຮົາບໍ່ສາລະພາບບາບທັນທີກໍຄ້າຍຄືວ່າ ເຮົາຊື້ແບບຕິດໜີ້ ວັນຫຼັງຕ້ອງໃຊ້ຄືນໝົດ. ຖ້າເຮົາບໍ່ສາລະພາບບາບນັ້ນ ຈະກອງເພີ້ມຂຶ້ນຈົນກວ່າຄວາມສຳພັນລະຫວ່າງເຮົາກັບພະເຈົ້າ ແລະລະຫວ່າງເຮົາກັບອ້າຍນ້ອງຄຣິສຕຽນຈະເສື່ອມ ເສຍລົງໄປ.

(ໃນຄຳເວົ້າຕໍ່ໄປນີ້ ໃຫ້ທ່ານໝາຍ √ ເອົາຂໍ້ໃດທີ່ເປັນຜົນຂອງບາບທີ່ບໍ່ສາລະພາບ)

ກ. _______ ມີຄວາມສຸກເພາະບໍ່ມີຫຍັງບັງໄວ້ຈາກພະເຈົ້າ

ຂ. _______ ບໍ່ຢາກເບິ່ງໜ້າຄຣິສຕຽນຄົນອື່ນເພາະເຮົາສຳນຶກຜິດຫຼາຍ

ຄ. _______ ບໍ່ສາມັກຄີກັບພະເຈົ້າ

ງ. _______ ມີຄວາມສະງົບຈິດໃຈ

ຈ. _______ ມີອັນປິດບັງພະເຈົ້າໄວ້

ສ. _______ ມີອັນປິດບັງພີ່ນ້ອງຄຣິສຕຽນ

**38** ຂໍ້ພະຄຳພີໃດຕໍ່ໄປນີ້ສອນວ່າ ເຮົາຄວນສາລະພາບບາບທັນທີ?

______ ມທ 5:25

______ ມທ 5:1

______ ອຟຊ 4:26

ຕອບ:

***34*** *ສາລະພາບຄວາມຜິດ*

***35*** *ສາລະພາບ*

***36*** *ກ. ຖືກ*

***37*** *ຂ. ຄ. ຈ. ແລະ ສ.ຖືກ*

***38*** *ມທ 5:25 ແລະ ເອເຟໂຊ 4:26*

**39** ຮູບໃດຕໍ່ໄປນີ້ສະແດງເຖິງຜູ້ທີ່ສາລະພາບບາບທັນທີ? ____________________________





| ຝຶກ: ໃຫ້ທ່ານເອົາສໍສີຂີດກ້ອງ ມທ 5:25 ແລະ ອຟຊ 4:26 |
|---|

**40** ຍົກຕົວຢ່າງ ມີແມ່ຍ່າເວົ້າຕາມຄວາມຕໍ່ໄປນີ້:
"ລູກໄພ້ເວົ້າຄວາມຕົວະເລື່ອງຂ້ອຍມາແລ້ວ ຂ້ອຍຈະບໍ່ຍົກໂທດໃຫ້ຈົນເຖິງວັນຕາຍ".
ຕາມ ອຟຊ 4:26 ແມ່ຍ່ານັ້ນຜິດໃນທາງນອງໃດ? ________________________________

**41** ໃຫ້ທ່ານກັບໄປເບິ່ງໜ້າປົກບົດນີ້ ໃນຮູບກາຕູນຂ້າງເທິງ

ກ. ຄົນທີ່ຍໍນ້ຳໜັກໄວ້ນັ້ນ ສະແດງວ່າເພິ່ນມີບາບເພີ້ມຂຶ້ນ ຫຼືວ່າເພິ່ນຮັບສາລະພາບບາບທັນທີ? ________________________________

ຂ. ການເປັນໜີ້ເພີ້ມຂຶ້ນຕໍ່ພະເຈົ້າ ອ້າງເຖິງຫຍັງ? ________________________________

ຄ. ໃຫ້ທ່ານສະເໜີຂໍ້ພະຄຳພີທີ່ບອກວິທີແກ້ບັນຫານີ້? ____________________________

**42** ຜົນຂອງການຮັບສາລະພາບບາບຄືຫຍັງ? (ໃຫ້ໝາຍ √ ໃສ່ຂໍ້ທີ່ຖືກ)

ກ. _______ ສຸຂະພາບດີດ້ານຈິດວິນຍານ

ຂ. _______ ສຸຂະພາບບໍ່ດີດ້ານຈິດວິນຍານ

ຄ. _______ ການສາມັກຄີດີຂຶ້ນກັບພະເຈົ້າ

ງ. _______ ການສາມັກຄີດີຂຶ້ນກັບອ້າຍນ້ອງຄຣິສຕຽນ

ຈ. _______ ຈະບັງໜ້າພະເຈົ້າໄວ້

ສ. _______ ທີ່ຈະກັ້ນຄວາມສຳພັນລະຫວ່າງເຮົາກັບຄຣິສຕຽນຄົນອື່ນ

ຕອບ:

**39** *ຮູບ ກ.*

**40** *ແມ່ຍ່າບໍ່ຍອມຍົກໂທດໃຫ້*

**41** *ກ. ມີບາບເພີ້ມຂຶ້ນ ຂ. ການບໍ່ຮັບສາລະພາບບາບ ຄ. ມທ 5:25 ແລະ ອຟຊ 4:26*

**42** *ກ. ຄ. ແລະ ງ.ຖືກ*

**43** ພະຍາດບາງຢ່າງມາຍ້ອນບາບກໍມີ ແຕ່ບໍ່ແມ່ນທຸກຢ່າງ, ເພາະສະນັ້ນການສາລະພາບບາບ ເຮັດ... (ໃຫ້ເລືອກ)

ກ. ໃຫ້ມີສຸຂະພາບຮ່າງກາຍດີທຸກເທື່ອ

ຂ. ໃຫ້ມີສຸຂະພາບຮ່າງກາຍດີແຕ່ບາງເວລາ

ຄ. ບໍ່ກ່ຽວຂ້ອງກັບສຸຂະພາບຮ່າງກາຍຈັກເທື່ອ

**44** ແຕ່ວ່າການຮັບສາລະພາບຜິດບາບພ້ອມດ້ວຍເຊື່ອໃນພະເຢຊູ ເຮັດໃຫ້... (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ມີສຸຂະພາບດີດ້ານວິນຍານທຸກເທື່ອ

ຂ. ມີສຸຂະພາບດີດ້ານວິນຍານແຕ່ບາງເທື່ອ

ຄ. ບໍ່ກ່ຽວຂ້ອງກັບສຸຂະພາບດ້ານວິນຍານຈັກເທື່ອ

**45** (ຈົ່ງຕື່ມຄວາມໃສ່ບ່ອນວ່າງ) ການ ______________________________ ມີຜົນດັ່ງຕໍ່ໄປນີ້: ສຸຂະພາບດີດ້ານວິນຍານທຸກເທື່ອ ສຸຂະພາບດີດ້ານຮ່າງກາຍບາງເທື່ອ ຄວາມສາມັກຄີກັບພະເຈົ້າດີຂຶ້ນ ຄວາມສາມັກຄີກັບຄຣິສຕຽນດີຂຶ້ນ

**46** ຂໍໃຫ້ທ່ານສະເຫນີຂໍ້ພະຄໍາພີ ທີ່ວ່າດ້ວຍການຮັບສາລະພາບບາບ? __________________

__________________________________ __________________________________

**47** ຜົນເກີດຈາກການຮັບສາລະພາບຜິດບາບມີຫຍັງແດ່? ____________________________

____________________________________________________________________

____________________________________________________________________

*ໃນບົດຮຽນຂ້າງຫນ້າເຮົາຈະຮຽນຮູ້ເລື່ອງການໃຊ້ພະຄໍາພີເປັນແບບສາລະພາບບາບ ທັງໃນເວລາອ້ອນວອນຜູ້ດຽວ ແລະເວລາອ້ອນວອນໃນປະຊຸມ. ໃຫ້ທ່ານກັບໄປຕອບຄໍາຖາມໃນຮູບສຸດທ້າຍຫນ້າປົກໃນບົດຮຽນຕໍ່ໄປດ້ວຍ.*

*ຢ່າລືມ Iໂຢຮັນ 1:9!*

*ຢ່າລືມທົດສອບຄວາມສາມາດຈົດຈໍາ ຈາກ ບົດເສັງທີ 20 ນີ້*

ຕອບ:

**43** *ຂ.ຖືກ*

**44** *ກ.ຖືກ*

**45** *ຮັບສາລະພາບຜິດບາບ*

**46** *ມັດທາຍ 5:25 ເອເຟໂຊ 4:26 I ຢຮ 1:9 ໆລໆ*

**47** *ສຸຂະພາບດີດ້ານວິນຍານທຸກເທື່ອ ຄືນດີກັບພະເຈາ*
*ສຸຂະພາບດີດ້ານກາຍບາງເທື່ອ ດີຂຶ້ນກັບພີ່ນ້ອງຄຣິສຕຽນ*